ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 01 ຫາ 05 ກໍລະກົດ 2024




ກອງປະຊຸມປິດໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ ທຍລ 3 ໄລຍະເພີ່ມທຶນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມປິດໂຄງການ ກອງທຶນຫຼຸດຜ່ອນ ຄວາມທຸກຍາກ ທລຍ 3 ໄລຍະ ເພີ່ມທຶນ

ໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ໃນວັນທີ 25 ມິຖຸນາ 2024, ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ຈັດກອງປະຊຸມ ປິດໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) 3 ໄລຍະເພີ່ມທຶນ ຂຶ້ນທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ຮສ. ປອ ລິນຄຳ ດວງສະຫວັນ, ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ແລະ ການເຂົ້າຮ່ວມຂອງທ່ານ ອາເລັກຊານເດີ ເຄຼມເມີ, ຫົວໜ້າຫ້ອງການທະນາຄານໂລກ ປະຈຳ ສປປ ລາວ; ບັນດາທ່ານຮອງລັດຖະມົນຕີ, ຮອງເຈົ້າແຂວງ, ຄະນະກຳມະການ ສະພາບໍລິຫານ ກອງທຶນຫຼຸດຜ່ອນຄວາມທຸກຍາກ; ຄະນະຜູ້ແທນ ແລະ ຊ່ຽວຊານທະນາຄານໂລກ; ບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງ, ຜູ້ປະສານງານໂຄງການ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ ຕະຫຼອດຮອດ ບັນດາທ່ານຜູ້ຕາງໜ້າ ຈາກອົງການຈັດຕັ້ງຕ່າງໆ ພາກລັດ ແລະ ອົງການຈັດຕັ້ງສາກົນ ເຂົ້າຮ່ວມທັງໝົດ 80 ກວ່າທ່ານ.

ໂຄງການ ທລຍ 3 ໄລຍະເພີ່ມທຶນ ໄດ້ຮັບການສະໜັບສະໜູນເງິນກູ້ຢືມຈາກທະນາຄານໂລກ ຈຳນວນ 22.5 ລ້ານໂດລາສະຫະລັດ ເພື່ອຈັດຕັ້ງປະຕິບັດແຕ່ປີ 2020-2024, ມີຈຸດປະສົງເພື່ອສ້າງເງື່ອນໄຂການເຂົ້າເຖິງການບໍລິການ, ການຊຸກຍູ້ການຜະລິດ ແລະ ການບໍລິໂພກອາຫານທີ່ມີໂພຊະນາການຂອງຊຸມຊົນເຂດທຸກຍາກໃນພື້ນທີ່ເປົ້າໝາຍຂອງໂຄງການເປັນໜຶ່ງໃນແຜນ




ງານໜຶ່ງດຽວທີ່ມີຫຼາຍຂະແໜງການເຂົ້າຮ່ວມ ເພື່ອແກ້ໄຂບັນຫາດ້ານໂພຊະນາການຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ແລະ ນອນໃນແຜນງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້ ໂຄງການ ທລຍ 3 ໄລຍະເພີ່ມທຶນ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 468 ບ້ານ ໃນ 12 ເມືອງ ຂອງ 4 ແຂວງ ຄື: ຜົ້ງສາລີ, ອຸດົມໄຊ, ຫົວພັນ ແລະ ຊຽງຂວາງ. ໃນກອງປະຊຸມປິດໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) 3 ໄລຍະເພີ່ມທຶນ, ໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດໂຄງການໄລຍະຜ່ານມາ ແລະ ການປະກອບຄຳຄິດຄຳເຫັນຂອງບັນດາຜູ້ແທນທີ່ເຂົ້າຮ່ວມປະຊຸມ ເຫັນຢ່າງຕັ້ງໜ້າ ກົງໄປກົງມາ ແລະ ມີລັກສະນະສ້າງສັນ ບົນພື້ນຖານຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງທຸກພາກສ່ວນກ່ຽວຂ້ອງ. ໃນຕອນທ້າຍຂອງກອງປະຊຸມ ທ່ານ ຮສ. ປອ ລິນຄຳ ດວງສະຫວັນ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວມີຄຳເຫັນ ໂດຍທ່ານໄດ້ສະເໜີໃຫ້ອົງການປົກຄອງ ແຂວງ ແລະ ເມືອງ ນຳເອົາຜົນສຳເລັດ ຂອງໂຄງການ ໄປສືບຕໍ່ຈັດຕັ້ງປະຕິບັດ ໂດຍໃຫ້ເຊື່ອມໂຍງກັບ ແຜນພັດທະນາເສດຖະກິດ-ສັງຄົມຄັ້ງຕໍ່ໄປ ຂອງທ້ອງຖິ່ນ; ສ້າງເງື່ອນໄຂ ເອົາກິດຈະກຳຂອງໂຄງການ ທີ່ສິ້ນສຸດລົງແລ້ວນີ້ ເຊື່ອມໂຍງກັບບັນດາ ໂຄງການ ລົງທຶນຂອງລັດ, ໂຄງການຮ່ວມມືກັບສາກົນຕ່າງໆ ແລະ ເອື້ອອຳນວຍ ໃຫ້ກຸ່ມຊາວກະສິກອນ ມີການຮ່ວມມືກັບ ພາກເອກະຊົນ ແລະ ຜູ້ປະກອບການ ໃນການຜະລິດສະບຽງອາຫານ ແລະ ການສົ່ງເສີມຜະລິດເປັນສິນຄ້າ ສ້າງລາຍຮັບໃຫ້ຊາວຊົນນະບົດ ໃຫ້ດີຂຶ້ນ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;